# ໜັງສື ຕີໂຕ

ໃຈຄວາມສຳຄັນ    ຕັ້ງຢູ່ໃນຄວາມສັດຊື່ໃນອົງພຣະຄຣິດ ຫລືເຣື່ອງການດຳເນີນຊີວິດພາຍໃນຄຣິສຕະຈັກ

ຈຳນວນບົດ    ໓ ບົດ

## ວ່າດ້ວຍຜູ້ຮັບໜັງສື

ຜູ້ຮັບໜັງສືນີ້ຄືທ່ານຕີໂຕ ເພິ່ນເປັນອາຈານສອນພຣະທັມຄົນນຶ່ງ ແລະເປັນເພື່ອນກັນກັບທ່ານໂປໂລ ຊື່ແລະການງານຂອງທ່ານຕີໂຕມີຢູ່ໃນໜັງສືໂກລິນໂທ ຄາລາເຕັຍ ແລະໃນໜັງສືເຫລັ້ມນີ້

ທ່ານຕີໂຕເປັນລູກຮັກໃນຄວາມເຊື່ອຂອງທ່ານໂປໂລ (໑:໔) ແລະເປັນຄົນຊາດເຮເລັນ (ຄາລາເຕັຍ ໒:໓) ເພິ່ນເຄີຍໄປຮ່ວມປະຊູມຢູ່ກຸງເຢຣູຊາເລັມພ້ອມກັບທ່ານໂປໂລ (ກິຈການ ໑໕:໒ ຄາລາເຕັຍ ໒:໓) ທ່ານໂປໂລໄດ້ນັບຖືເພິ່ນໃນຖານະເປັນຄົນສັດຊື່ ແລະມີປັນຍາຄວາມຮູ້

ທ່ານໂປໂລໄດ້ໃຊ້ເພິ່ນໄປເມືອງໂກລິນໂທເຖິງສາມເທື່ອ ເພື່ອສົ່ງໜັງສື ແລະ ເພື່ອບອກສອນພວກພີ່ນ້ອງໃຫ້ ມີ ໃຈເປັນອັນນຶ່ງອັນດຽວກັນກັບທັງເພື່ອໃຫ້ເພິ່ນກວດເບິ່ງວ່າ ພວກເຂົາໄດ້ຍອມຮັບເອົາຄຳບອກສອນຂອງທ່ານໂປໂລຫລືບໍ່ (໒ ໂກລິນໂທ ໒:໑໒-໑໓; ໗:໖-໑໓; ໘:໖, ໑໒,໑໘,໒໓)

ໃນພັງສືນີ້ເຮົາຈະເຫັນວ່າ ທ່ານໂປໂລໄດ້ຝາກງານສຳຄັນໃຫ້ທ່ານຕີໂຕເຮັດ ຄືໃຫ້ເພີ່ມຈັດການພາຍໃນຄຣິສຕະຈັກທີ່ເກາະກະເຣເຕ ບົດ ໑:໕ ຄຣິສຕະຈັກໃນເກາະນັ້ນພວກເຮົາບໍ່ຮູ້ວ່າໃຜເປັນຜູ້ຕັ້ງຂຶ້ນ ພຽງແຕ່ ຮູ້ ວ່າ ໃນວັນເພັນເຕກອສເຕນັ້ນ ໄດ້ ມີ ຊາວກະເລັດມາຮ່ວມ ຟັງ ການສະແດງຂອງທ່ານເປໂຕ (ກິຈການ ໒:໑໑) ແລ້ວໄດ້ເຊື່ອພຣະເຢຊູ ແລະຕິດຕາມທ່ານຕີໂຕໄປ ບົດ ໑:໕

## ວ່າດ້ວຍຄວາມມຸ່ງໝາຍ

ການທີ່ທ່ານໂປໂລຂຽນຈົດໝາຍສະບັບນີ້ໄປຫາທ່ານຕີໂຕ ກໍເພື່ອຢາກໃຫ້ທ່ານຕີໂຕແຕ່ງຕັ້ງພວກເຖົ້າແກ່ຂຶ້ນໃນຄຣິສຕະຈັກ ເພາະມີບັນຫາເກີດຂຶ້ນໃນຄຣິສຕະຈັກນັ້ນ ຄືມີບາງຄົນໄດ້ເວົ້າໄປໃນທາງບໍ່ມີປະໂຍດ ມີຜູ້ຫລອກລວງ ມີຄົນທໍ່ວດີແລະມີຜູ້ເຮັດໃຫ້ແຕກແຍກກັນ ສະນັ້ນທ່ານໂປໂລ ຈຶ່ງຂຽນຈົດໝາຍນີ້ ໄປຫາທ່ານຕີໂຕທີ່ ເກາະກະເຣເຕ ເພື່ອໃຫ້ ເພີ່ມຕັກເຕືອນແລະບອກສອນພວກເຂົາ

## ວ່າດ້ວຍເນື້ອຄວາມ

໑. ທ່ານໂປໂລໄດ້ສອນຫລັກສຳຄັນຂອງຂ່າວປະເສີດ ເພື່ອໃຫ້ຮູ້ຈັກຄວາມພົ້ນແລະທາງບໍຣິສຸດ ບົດ ໑:໑–ມີ ໒:໑໑-໑໔; ມີ:ມີ–ໆ

໒. ຂໍ້ຄວາມສຳຄັນທີ່ສຸດມີຢູ່ໃນ ບົດ ໒:໑໑–໑໔ ຄື

– ພຣະຄຸນຂອງພຣະເຈົ້າ

– ການສະເດັດມາຄັ້ງທີ ໑ ຂອງພຣະເຢຊູ

- ກິຈການຂອງພຣະບຸດໄດ້ເກີດພາກເປັນຄຣິສຕະຈັກ
- ກິຈການແລະຄວາມຫວັງຂອງຄົນຄຣິສຕຽນ
- ການສະເດັດມາຄັ້ງທີ ໒ ຂອງພຣະເຢຊູ
- ຄວາມພົ້ນ ຄວາມບໍຣິສຸດ ແລະການບົວຣະບັດ

## ວ່າດ້ວຍຫົວຂໍ້ບົດ

## ບົດທີ ໑ ວ່າດ້ວຍຄຣິສຕະຈັກ

ກ. ພວກເຖົ້າແກ່ຕ້ອງເປັນຄົນຢ່າງໃດ ຂໍ້ ໕–໙

ຂ. ຄວາມຈຳເປັນທີ່ຕ້ອງມີພວກເຖົ້າແກ່ ຂໍ້ ໑໐–໑໖

## ບົດທີ ໒ ວ່າດ້ວຍຄຳສອນໃນຄຣິສຕະຈັກ

ກ. ພວກຄຣິສຕຽນຕ້ອງປະພຶດຕາມຄຳສອນ
ອັນດີ ຂໍ້ ໑–໑໐

ຂ. ຫລັກແຫ່ງຄຳສອນ ຂໍ້ ໑໑–໑໕

## ບົດທີ ໓ ວ່າດ້ວຍກິຈການຂອງພວກ
## ຄຣິສຕະຈັກ ຂໍ້ ໑–໑໕